ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Co-funded by the European Union

Implemented by giz Deutsche Gesellschaft für Internationale Zusammenarbeit (GIZ) GmbH



*ໜ່ວຍງານລາດຕະເວນ ກອດລາດຕະເວນ ຢູ່ ອຸທິຍານແຫ່ງຊາດ ຫີນໜາມໜໍ່*

*ຮູບພາບ: © GIZ/ProFEB*

# ໂຄງການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນານາພັນ ແບບຍືນຍົງ (ProFEB)

## ສະພາບທົ່ວໄປ

ປະເທດລາວເປັນປະເທດທີ່ອຸດົມສົມບູນໄປດ້ວຍຊີວະນາງພັນ, ກຳລັງປະເຊີນໜ້າກັບສິ່ງທ້າທາຍຕ່າງໆ, ເນື່ອງຈາກມີການທຳລາຍປ່າໄມ້ ແລະ ການສູນເສຍຊີວະນາງພັນ, ເຊິ່ງຕົ້ນຕໍເກີດມາຈາກບັນດາກິດຈະກຳຜະລິດກະສິກຳ, ການພັດທະນາພື້ນຖານໂຄງລ່າງ ແລະ ການຄ້າຂາຍສັດປ່າຜິດກົດໝາຍ. ເພື່ອຮັບມືກັບບັນຫາດັ່ງກ່າວ, ລັດຖະບານມີຄວາມມຸ່ງໝັ້ນເພື່ອເພີ່ມການປົກຄຸມຂອງປ່າໄມ້ໃຫ້ໄດ້ 70%, ໂດຍຜ່ານການຄຸ້ມຄອງປ່າໄມ້ແບບຍືນຍົງ. ແຕ່ຢ່າງໃດກໍຕາມ, ຍັງມີສິ່ງທ້າທາຍຫຼາຍດ້ານ, ເປັນຕົ້ນແມ່ນທາງດ້ານການບໍລິຫານຄຸ້ມຄອງປ່າໄມ້, ການສ້າງມູນຄ່າໃນຕ່ອງໂສ້ທຸລະກິດໄມ້ແບບຍືນຍົງ ແລະ ການມີສ່ວນຮ່ວມຂອງບັນດາຊຸມຊົນທ້ອງຖິ່ນ, ໂດຍສະເພາະແມ່ນແມ່ຍິງໃນຂະບວນການດັ່ງກ່າວ. ໂຄງການມີຈຸດປະສົງເພື່ອແກ້ໄຂບັນຫາເຫຼົ່ານີ້ ແລະ ປັບປຸງຊີວິດການເປັນຢູ່ຂອງບັນດາຊຸມຊົນທ້ອງຖິ່ນ ແລະ ໃນຂະນະດຽວກັນກໍເພື່ອປົກປັກຮັກສາລະບົບນິເວດ ແລະ ຊີວະນານາພັນ.

## ຈຸດປະສົງຂອງໂຄງການ

ບັນດາຊຸມຊົນທ້ອງຖິ່ນ, ໂດຍສະເພາະແມ່ນແມ່ຍິງ, ໄດ້ເຂົ້າຮ່ວມໃນວຽກງານໂຄງການຢ່າງຫ້າວຫັນ, ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງ, ການສ້າງມູນຄ່າຕ່ອງໂສ້ທຸລະກິດໄມ້ແບບຍືນຍົງ, ການປະກອບສ່ວນເຂົ້າໃນການອະນຸລັກປ່າໄມ້ ແລະ ການພັດທະນາເຕີບໂຕແບບສີຂຽວ, ແບບຍືນຍົງ ແລະ ແບບມີສ່ວນຮ່ວມໃນ ສປປ ລາວ.

## ວິທີການຈັດຕັ້ງປະຕິບັດ

ໂຄງການນີ້ ຈະຊຸກຍູ້ສົ່ງເສີມຂະບວນການທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນໃນການອະນຸລັກ ແລະ ຊົມໃຊ້ຊັບພະຍາກອນປ່າໄມ້ ແລະ ຊີວະນານາພັນແບບຍືນຍົງໃນດ້ານ:

- **ນະໂຍບາຍປ່າໄມ້:** ອຳນວຍຄວາມສະດວກໃນການປຶກສາຫາລື, ສົ່ງເສີມການກຳນົດນະໂຍບາຍ ແລະ ປັບປຸງກອບນິຕິກຳທີ່ຕິດພັນກັບຊີວະນາງພັນ ແລະ ປ່າສະຈາກການທຳລາຍປ່າໄມ້ໃນຂະແໜງການປ່າໄມ້.

| | |
|---|---|
| **ຊື່ໂຄງການ** | ໂຄງການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດ ປ່າໄມ້ ແລະ ຊີວະນານາພັນແບບຍືນຍົງ (ProFEB) |
| **ໃຫ້ທຶນໂດຍ** | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນ ເຢຍລະມັນ (BMZ) |
| **ສົມທົບທຶນໂດຍ** | ສະຫະພາບ ເອີຣົບ |
| **ເຂດເປົ້າໝາຍຂອງໂຄງການ** | ແຂວງ ຄຳມ່ວນ, ຫລວງ ພະບາງ, ອຸດົມໄຊ, ຫົວພັນ, ໄຊຍະບູລີ, ແຂວງ ວຽງຈັນ ແລະ ນະຄອນຫລວງວຽງຈັນ, ສປປ ລາວ |
| **ຄູ່ຮ່ວມງານຂອງໂຄງການ** | ກະຊວງກະສິກຳ ແລະ ປ່າໄມ້ (MAF) |
| **ໄລຍະເວລາຂອງໂຄງການ** | ເດືອນ ພຶດສະພາ 2021—ເດືອນ ມີນາ 2027 |

- **ການອະນຸລັກຊີວະນານາພັນ:** ການສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນທີ່ສຳຄັນໃນ ສປປ ລາວ ເພື່ອການຮ່ວມມືພາຍໃນອົງກອນ ແລະ ຮ່ວມມືຂ້າມຊາຍແດນໃນການອະນຸລັກສັດປ່າ ແລະ ການຄຸ້ມຄອງພູມມີທັດ ຂອງອຸທິຍານແຫ່ງຊາດ ຫີນໜາມໜໍ່ ແລະ ອຸທິຍານແຫ່ງຊາດ ຟອງຍາ-ແກບາງ.
- **ການສຶກສາ:** ຊຸກຍູ້ສົ່ງເສີມການຄົ້ນຄວ້າ, ການຝຶກອົບຮົມ ແລະ ການສ້າງຄວາມສາມາດທາງດ້ານວິຊາການເພື່ອປັບປຸງການນຳໃຊ້ ແລະ ການຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນຍົງ ໃນ ສປປ ລາວ.
- **ການຟື້ນຟູພູມມີທັດປ່າໄມ້:** ການສ້າງຄູ່ຮ່ວມງານລະຫວ່າງບັນດາພາກເອກະຊົນ, ຊຸມຊົນຂັ້ນບ້ານ, ລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມເພື່ອສ້າງຄວາມເຂັ້ມແຂງໃນການຟື້ນຟູພູມມີທັດປ່າໄມ້ເພື່ອການປັບຕົວຕໍ່ກັບດິນຟ້າອາກາດ ແລະ ການອະນຸລັກຊີວະນາງພັນ.

- **ການສ້າງມູນຄ່າຕ່ອງໂສ້:** ການສ້າງຄູ່ຮ່ວມງານດ້ານທຸລະກິດເພື່ອສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສ້າງມູນຄ່າໃນຕ່ອງໂສ້ທຸລະກິດໄມ້ແບບຍືນຍົງ ແລະ ສາມາດແຂ່ງຂັນໄດ້.

## ຜົນການດຳເນີນງານ

ໂຄງການ ProFEB ມີຈຸດປະສົງຊຸກຍູ້ສົ່ງເສີມການເຕີບໂຕແບບສີຂຽວ, ແບບຍືນຍົງ ແລະ ແບບມີສ່ວນຮ່ວມ ໂດຍເພີ່ມການຜະລິດພາຍໃນ, ການປຸງແຕ່ງຜະລິດຕະພັນ, ການສົ່ງອອກ ແລະ ຊຸກຍູ້ລາຍຮັບແຫ່ງຊາດໃຫ້ເພີ່ມຂຶ້ນ ແລະ ການສ້າງວຽກເຮັດງານທຳທີ່ດີ, ຕິດພັນກັບການສ້າງມູນຄ່າຜະລິດຕະພັນຈາກປ່າໄມ້. ໂຄງການສະໜັບສະໜູນ ສປປ ລາວ ໃນວຽກງານການຫຼຸດຜ່ອນການປ່ອຍທາດອາຍກາກບອນ ແລະ ນຳໃຊ້ຜົນການດຳເນີນງານຂອງໂຄງການເຂົ້າໃນການແກ້ໄຂບັນຫາຈາກການປ່ຽນແປງສະພາບດິນຟ້າອາກາດ ໂດຍການເສີມຂະຫຍາຍວຽກງານປົກປັກຮັກສາ, ຟື້ນຟູ ຫລື ການຄຸ້ມຄອງປ່າໄມ້ແບບຍືນຍົງ.

ໂດຍອີງຕາມຄຳແນະນຳທາງດ້ານວິຊາການຈາກໂຄງການ ProFEB, ລັດຖະບານ ແຫ່ງ ສປປ ລາວ ໄດ້ຍື່ນຄຳຮ້ອງເຖິງອົງການ UNESCO ເພື່ອສະເໜີໃຫ້ອຸທິຍານແຫ່ງຊາດຫີນໜາມໜໍ່ ເຂົ້າເປັນມໍລະດົກໂລກ, ເຊິ່ງເປັນວຽກງານຮ່ວມມືຂ້າມຊາຍແດນກັບອຸທິຍານແຫ່ງຊາດ ຟອງຢາ-ແກບາງ, ຢູ່ປະເທດ ຫວຽດນາມ. ອົງການ UNESCO ປະຈຳນະຄອນ ປາຣີ ໄດ້ຢັ້ງຢືນວ່າເອກະສານສະເໜີເຂົ້າເປັນມໍລະດົກໂລກດັ່ງກ່າວມີຄົບຖ້ວນທາງດ້ານວິຊາການໝົດແລ້ວ. ໃນປັດຈຸບັນ, ເອກະສານດັ່ງກ່າວແມ່ນຢູ່ໃນຂັ້ນຕອນການປະເມີນເປັນບາດກ້າວຕໍ່ໄປ. ຖ້າການສະເໜີເຂົ້າເປັນມໍລະດົກໂລກໄດ້ຮັບຜົນສຳເລັດ, ກໍຈະເປັນການຮັບຮູ້ຄວາມອຸດົມສົມບູນຂອງຊີວະນາໆພັນ ແລະ ຄວາມສຳຄັນຂອງທຳມະຊາດຂອງທັງສອງອຸທິຍານ, ເຊິ່ງຈະກາຍເປັນມໍລະດົກໂລກທາງທຳມະຊາດແຫ່ງທຳອິດແບບຮ່ວມຊາຍແດນຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້. ໂຄງການ ProFEB ໄດ້ປະກອບສ່ວນເຂົ້າໃນວຽກງານນີ້ມາເປັນເວລາຫຼາຍກວ່າໜຶ່ງທົດສະວັດໃນການຄຸ້ມຄອງອຸທິຍານດັ່ງກ່າວແບບມີສ່ວນຮ່ວມ ແລະ ການພັດທະນາແບບຍືນຍົງຢູ່ໃນເຂດຫີນໜາມໜໍ່ ແລະ ໄດ້ອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືກັບຄູ່ຮ່ວມງານຝ່າຍຫວຽດນາມ.

ການປຶກສາຫາລືກ່ຽວກັບຂະບວນການປະຕິບັດກົດໝາຍປ່າໄມ້, ການປົກຄອງ ແລະ ການຄ້າ ແລະ ສັນຍາການຄ້າໄມ້ແບບສະໝັກໃຈ (FLEGT-VPA) ໄດ້ສົ່ງຜົນທີ່ດີຢ່າງຫຼວງຫຼາຍມາໃຫ້ປະເທດລາວ. ແຜນວຽກລິເລີ່ມ FLEGT-VPA ນີ້ໄດ້ຊ່ວຍກະກຽມວຽກງານພື້ນຖານໃຫ້ແກ່ລະບົບການຮັບປະກັນໄມ້ທີ່ຖືກກົດໝາຍ ຫລື (TLAS), ເຊິ່ງເປັນເຄື່ອງມືສຳຄັນທີ່ຮັບປະກັນການສະໜອງໄມ້ທີ່ຖືກກົດຫມາຍ ແລະ ມີຄວາມໂປ່ງໃສ. ແຜນວຽກລິເລີ່ມ FLEGT-VPA ຍັງເປັນການສົ່ງເສີມໃຫ້ມີການເຂົ້າຮ່ວມຂອງພາກລັດ ແລະ ພາກເອກະຊົນ, ພ້ອມທັງ ອົງການຈັດຕັ້ງທາງສັງຄົມໃນວຽກງານການຄຸ້ມຄອງປ່າໄມ້. ວຽກງານນີ້ໄດ້ຊ່ວຍປັບປຸງການຮ່ວມມືລະຫວ່າງບັນດາຂະແໜງການໃນການພັດທະນາກອບວຽກນິຕິກຳ ສຳລັບການສະໜອງໄມ້ຖືກກົດຫມາຍ. ການພັດທະນາລະບົບ TLAS ແມ່ນອີງໃສ່ກົດຫມາຍວ່າດ້ວຍປ່າໄມ້ ຂອງ ສປປ ລາວ ສະບັບ ປີ 2019, ສຳລັບໄມ້ຊົມໃຊ້ພາຍໃນປະເທດ ແລະ ສົ່ງອອກໄປຍັງຕະຫຼາດພາກພື້ນ ແລະ ສາກົນ, ລວມທັງຕະຫຼາດໃນສະຫະພາບ ເອີຣົບ ອີກດ້ວຍ.

## ບົດບາດຍິງ-ຊາຍ

ໂຄງການ ProFEB ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງໃນທຸກຂົງເຂດວຽກງານ. ການປະຕິບັດພັນທະທາງດ້ານນີ້ໄດ້ສະແດງອອກໃຫ້ເຫັນຢູ່ໃນການພັດທະນາແຜນຍຸດທະສາດ ແລະ ແຜນດຳເນີນງານບົດບາດຍິງ-ຊາຍ ແລະ ການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນວຽກງານຂອງບັນດາກະຊວງ ແລະ ສະຖາບັນການສຶກສາ. ຈຸດສຸມທີ່ສຳຄັນແມ່ນເພື່ອເພີ່ມການສົ່ງເສີມ ແລະ ການມີສ່ວນຮ່ວມຂອງແມ່ຍິງໃຫ້ຫຼາຍຂຶ້ນຢູ່ໃນທຸກລະດັບ ແລະ ຢູ່ພາຍໃນໂຄງການ. ພວກເຮົາຮ່ວມງານກັບຫຼາຍອົງການຈັດຕັ້ງທາງສັງຄົມ. ໃນນັ້ນ, ລວມທັງສະຫະພັນແມ່ຍິງລາວເພື່ອແກ້ໄຂບັນຫາຄວາມບໍ່ສະເໝີພາບລະຫວ່າງບັນດາຂະແໜງການ ແລະ ຄວາມບໍ່ສະເໝີພາບຍິງ-ຊາຍ. ໂຄງການ ProFEB ມີເປົ້າໝາຍທີ່ຈະສ້າງມູນຄ່າຕ່ອງໂສ້ຈາກຜະລິດຕະພັນປ່າໄມ້ແບບມີສ່ວນຮ່ວມ ແລະ ສະເໝີພາບ, ເຊິ່ງຈະປະກອບສ່ວນໃຫ້ແກ່ການພັດທະນາແບບຍືນຍົງ ແລະ ເຊື່ອມສານບົດບາດຍິງ-ຊາຍເຂົ້າໃນທຸກຂົງເຂດວຽກງານໃນ ສປປ ລາວ.


*ການກວດກາວຽກງານປ່າໄມ້ ໂດຍ ເຈົ້າໜ້າທີ່ປ່າໄມ້*
*ຮູບພາບ: ©GIZ/ProFEB*

**ກ່ຽວກັບ ຫ້ອງການ GIZ Laos**

GIZ, ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງໜ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນ ເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກຳລັງສະໜັບສະໜູນໜູ ບັນດາໂຄງການໃນ 4 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກ ສາທຳມະຊາດ ແລະ ຊັບພະຍາກອນທຳມະຊາດ, ຄ) ການພັດທະນາເສດຖະກິດແບບຍືນຍົງ, ແລະ ງ) ວຽກງານການປົກຄອງທີ່ດີ.

ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງເວັບໄຊ www.giz.de/laos


| | |
|---|---|
| ຈັດພິມໂດຍ | Deutsche Gesellschaft für Internationale Zusammenarbeit (GIZ) GmbH |
| | ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ |
| | ໂຄງການປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວິນາໆພັນແບບຍືນຍົງ (ProFEB) |
| | ບ້ານ ສີດຳດວນ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ |
| | T: +85621 253 824 |
| | www.giz.de/laos (EN); www.giz.de/laos-la (LA) |
| ລົງວັນທີ | ເດືອນພຶດສະພາ 2024 |
| ອອກແບບໂດຍ | ຫນ່ວຍງານຂໍ້ມູນຂ່າວສານ, ຫ້ອງການ GIZ ປະຈຳ ສປປ ລາວ, ນະຄອນຫລວງວຽງຈັນ |
| ຮູບຖ່າຍໂດຍ | GIZ/ProFEB |
| ຮຽບຮຽງໂດຍ | ທ່ານ ມາຕິນ ໂນວັກ |
| ຕິດຕໍ່ | ທ່ານ ມາຕິນ ໂນວັກ (martin.nowack@giz.de) |
| | ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ |
| ຕາງຫນ້າໃຫ້ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ (BMZ) |
| | ໂຄງການດັ່ງກ່າວໄດ້ຮັບທຶນສະຫນັບສະຫນູນຈາກ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ (BMZ) ແລະ ສະຫະພາບເອີຣົບ ປະຈຳ ສປປ ລາວ ແລະ ໄດ້ຈັດຕັ້ງປະຕິບັດໂດຍ ຫ້ອງການ GIZ. |
| ເວັບໄຊທີ່ກ່ຽວຂ້ອງອື່ນໆ | **FLEGT:** www.flegtlaos |
| | **Hin Nam No National Park:** www.hinnamno.org |
| | **Lao Wildlife Heros:** https://laowildlifeheroes.org/en/ |